ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

628, ໜ່ວຍ 19, ບ້ານ ໂພນພະເນົາ, ກມ. 5, ຖະໜົນ ໄກສອນພົມວິຫານ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ.
ໂທ-ແຟັກ: +856 21 418 062-6

ບົດບັນທຶກກອງປະຊຸມວິສາມັນ ຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2020
ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ ("ບໍລິສັດ")

ວັນ, ເວລາ ແລະ ສະຖານທີ່ :

ກອງປະຊຸມໄດ້ຈັດຂຶ້ນໃນວັນທີ 04 ທັນວາ 2020 ເວລາ 10:00 ໂມງ ທີ່ ຫ້ອງໄຂ່ມຸກ (Pearl room) ຊັ້ນ4, ຄອນເວັນຊັນ ເຊັນເຕີ, ໂຮງແຮມ ແລນມາກ ແມ່ຂອງ ລີເວີໄຊ, ບ້ານ ທາດຂາວ ເມືອງ ສີສັດຕະນາກ ນະຄອນຫຼວງ ວຽງຈັນ.

ເລີ່ມກອງປະຊຸມ:

ທ່ານ ຊາຄຣິດ ນັກສອນ ປະທານສະພາບໍລິຫານຂອງບໍລິສັດເປັນປະທານກອງປະຊຸມວິສາມັນ ຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2020, ປະທານກອງປະຊຸມໄດ້ກ່າວຕ້ອນຮັບບັນດາທ່ານຜູ້ຖືຮຸ້ນ ແລະ ຜູ້ເຂົ້າຮ່ວມທັງໝົດພ້ອມທັງແຈ້ງໃຫ້ຊາບວ່າ ມີຜູ້ເຂົ້າຮ່ວມປະຊຸມທັງໝົດ 26 ທ່ານ, ເຂົ້າຮ່ວມປະຊຸມດ້ວຍຕົນເອງ 14 ທ່ານ ແລະ ມອບສິດໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນ 12 ທ່ານ ຖືຮຸ້ນລວມ 32,404,852 ຮຸ້ນ ຫຼື ເທົ່າກັບ 81.01% ຂອງຈຳນວນຮຸ້ນທັງໝົດ ຖືວ່າຄົບອົງປະຊຸມຕາມລະບຽບກົດໝາຍ ແລະ ລະບຽບຂອງບໍລິສັດ, ປະທານໄດ້ເປີດກອງປະຊຸມຢ່າງເປັນທາງການ ໃນເວລາ 10:00 ໂມງ ແລະ ມອບໝາຍໃຫ້ພິທີກອນແນະນຳສະມາຊິກສະພາບໍລິຫານລວມທັງເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ເຂົ້າຮ່ວມປະຊຸມດັ່ງຕໍ່ໄປນີ້:

ຜູ້ເຂົ້າຮ່ວມ:

- **ສະມາຊິກສະພາບໍລິຫານຜູ້ທີ່ເຂົ້າຮ່ວມກອງປະຊຸມ:**
  1. ທ່ານນາງ ອິນທະວິໄລ ອຸດົມ — ຮອງປະທານສະພາບໍລິຫານ
  2. ທ່ານ ມານິບ ຕຣີລິດວິໄລ — ສະມາຊິກສະພາບໍລິຫານ ແລະ ຜູ້ອຳນວຍການໃຫຍ່
- **ສະມາຊິກສະພາບໍລິຫານຜູ້ທີ່ເຂົ້າຮ່ວມປະຊຸມຜ່ານ ວີດີໂອ ຄອນເຟີເລັນ:**
  1. ທ່ານ ຊາຄຣິດ ນັກສອນ — ປະທານສະພາບໍລິຫານ
  2. ທ່ານນາງ ປຣາດຖະໜາ ນັກສອນ — ສະມາຊິກສະພາບໍລິຫານ
  3. ທ່ານນາງ ສຸທິດາ ນັກສອນ — ສະມາຊິກສະພາບໍລິຫານ
  4. ທ່ານ ກຽງໄກ ນິດສະຍັນ — ສະມາຊິກສະພາບໍລິຫາຍ
  5. ທ່ານ ນັນທະພັດ ງາມປລັ່ງ — ສະມາຊິກສະພາບໍລິຫານອິດສະຫຼະ
  6. ທ່ານ ທິຣະເມດ ວຸດທິພັດພິບູນ — ສະມາຊິກສະພາບໍລິຫານອິດສະຫຼະ
  7. ທ່ານ ວິນຍູ ຈີລະປະພາການ — ສະມາຊິກສະພາບໍລິຫານອິດສະຫຼະ

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

628, ໜ່ວຍ 19, ບ້ານ ໂພນພະເນົາ, ກມ. 5, ຖະໜົນ ໄກສອນພົມວິຫານ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ.
ໂທ-ແຟັກ: +856 21 418 062-6

- **ຜູ້ບໍລິຫານທີ່ເຂົ້າຮ່ວມກອງປະຊຸມ:**

1. ທ່ານ ທອງຖະຫວັນ ທອງແຖມ	ຮັກສາການຮອງຜູ້ອຳນວຍການດ້ານການເງິນ
2. ທ່ານ ຊັດພົນໄຊ ປັນຍາທຳມະດີ	ຮອງຜູ້ອຳນວຍການດ້ານດຳເນີນການ
3. ທ່ານນາງ ສຸລິພອນ ສຸວັນໄຊລົບ	ຜູ້ຈັດການພະແນກບັນຊີ

- **ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ:**

1. ທ່ານນາງ ສຸລິພອນ ສຸວັນໄຊລົບ	ໃນນາມຄະນະກຳມະການກວດກາການດຳເນີນກອງປະຊຸມ ແລະ ລົງຄະແນນສຽງ.
2. ທ່ານນາງ ເດືອນເພັນ ສີປະມອນ	ໃນນາມຄະນະກຳມະການກວດກາການດຳເນີນກອງປະຊຸມ ແລະ ລົງຄະແນນສຽງ.
3. ທ່ານ ພົງສີລິ ທອງແຖມ ນະ ອາຍຸດທະຍາ	ຜູ້ຖືຮຸ້ນລາຍຍ່ອຍຂອງ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອມະຫາຊົນ ໃນນາມຄະນະກຳມະການກວດກາການດຳເນີນກອງປະຊຸມ ແລະ ລົງຄະແນນສຽງ.
4. ທ່ານ ວົງປະສິດ ແສງວົງເດືອນ	ຜູ້ຕາງໜ້າຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບໃນນາມຄະນະຕິດຕາມ ແລະ ປະເມີນ ການດຳເນີນກອງປະຊຸມ.
5. ທ່ານນາງ ອານຸສອນ ອຸ້ຍພິລາວົງ	ຜູ້ຕາງໜ້າຈາກຕະຫຼາດຫຼັກຊັບລາວ,ໃນນາມຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມ.
6. ທ່ານນາງ ວັນນະພອນ ສຸນັນທາ	ຜູ້ຕາງໜ້າຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບໃນນາມຄະນະຕິດຕາມ ແລະ ປະເມີນ ການດຳເນີນກອງປະຊຸມ.
7. ທ່ານນາງ ພູວັນ ຈັນທະລັງສີ	ຜູ້ຖືຮຸ້ນລາຍຍ່ອຍຂອງບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ ໃນນາມຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມ.

ຫລັງຈາກນັ້ນ, ພິທີກອນໄດ້ລາຍງານແຕ່ລະວາລະຂອງກອງປະຊຸມສຳລັບມື້ນັ້ນແລະໄດ້ອະທິບາຍວິທີການລົງຄະແນນສຽງໃຫ້ຜູ້ເຂົ້າຮ່ວມກອງປະຊຸມດັ່ງຕໍ່ໄປນີ້:

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

628, ໜ່ວຍ 19, ບ້ານ ໂພນພະເນົາ, ກມ. 5, ຖະໜົນ ໄກສອນພົມວິຫານ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ.
ໂທ-ແຟັກ: +856 21 418 062-6

1. ວາລະ:
   - 1.1 ພິຈາລະນາຮັບຮອງລາຍງານກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີໃນຄັ້ງທີ່ຜ່ານມາ
   - 1.2 ພິຈາລະນາອະນຸມັດ ແກ້ໄຂສັດສ່ວນຮຸ້ນຂອງຜູ້ສ້າງຕັ້ງ ແລະ ປ່ຽນສັດສ່ວນຮຸ້ນ Floating ໃນ ຕະຫຼາດຫຼັກຊັບລາວ
   - 1.3 ພິຈາລະນາອະນຸມັດປ່ຽນແປງມູນຄ່າຮຸ້ນ ຫຼື ມູນຄ່າກຳນົດ (Par value)
   - 1.4 ພິຈາລະນາອະນຸມັດແກ້ໄຂກົດລະບຽບຂອງບໍລິສັດ
   - 1.5 ເລື່ອງອື່ນໆ (ຖ້າມີ)

2. ວິທີລົງຄະແນນສຽງ
   - ທ່ານຜູ້ຖືຮຸ້ນໜຶ່ງທ່ານມີຄະແນນສຽງເທົ່າກັບຈຳນວນຮຸ້ນທີ່ທ່ານຖືຢູ່ໂດຍໜຶ່ງຮຸ້ນເທົ່າກັບໜຶ່ງສຽງ
   - ໃນການລົງຄະແນນສຽງໃນແຕ່ລະວາລະ ປະທານຈະສອບຖາມຜູ້ຖືຮຸ້ນວ່າ ມີຜູ້ຖືຮຸ້ນທ່ານໃດບໍ່ເຫັນດີ ແມ່ນໃຫ້ລົງຄະແນນສຽງໃນບັດລົງຄະແນນສຽງໃນວາລະນັ້ນໆ ທີ່ເຈົ້າໜ້າທີ່ໄດ້ແຈກຢາຍໃຫ້ກ່ອນເຂົ້າຫ້ອງປະຊຸມພ້ອມທັງຍົກບັດດັ່ງກ່າວຂຶ້ນສູງໆ ຈົນກວ່າຈະມີເຈົ້າໜ້າທີ່ມາເກັບບັດລົງຄະແນນເພື່ອໄປກວດນັບຄະແນນສຽງ ແລະ ສຳລັບຜູ້ຖືຮຸ້ນທີ່ບໍ່ໄດ້ຍົກບັດຖືວ່າຜູ້ຖືຮຸ້ນທ່ານນັ້ນ ມີມະຕິເຫັນດີຕາມທີ່ສະເໜີໃນກອງປະຊຸມ
   - ສຳລັບຜູ້ຖືຮຸ້ນທີ່ມອບສິດໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນ ແລະ ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຜູ້ຖືຮຸ້ນ ຕາມທີ່ໄດ້ລະບຸໄວ້ໃນໃບມອບສິດ, ບໍລິສັດໄດ້ນຳເອົາການລົງຄະແນນສຽງຕາມທີ່ຜູ້ຖືຮຸ້ນລະບຸໄວ້ໃນໃບມອບສິດດັ່ງກ່າວ ໄປບັນທຶກລວມຄະແນນໄວ້ລ່ວງໜ້າໃນເວລາທີ່ຜູ້ຕາງໜ້າລົງທະບຽນເປັນທີ່ຮຽບຮ້ອຍແລ້ວ ເພື່ອເປັນຄວາມສະດວກໃຫ້ແກ່ຜູ້ຕາງໜ້າບໍ່ຕ້ອງລົງຄະແນນສຽງໃນບັດລົງຄະແນນໃນກອງປະຊຸມ

3. ການນັບຄະແນນສຽງ
   - ການນັບຄະແນນສຽງໃນແຕ່ລະວາລະ ຈະນັບຄະແນນສຽງທີ່ບໍ່ເຫັນດີຂອງຜູ້ຖືຮຸ້ນໃນກອງປະຊຸມ ແລະ ຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມແທນຕາມທີ່ບໍລິສັດໄດ້ບັນທຶກໄວ້ລ່ວງໜ້າໃນວາລະທີ່ຜູ້ຕາງໜ້າລົງທະບຽນເຂົ້າຮ່ວມກອງປະຊຸມ ໂດຍນຳມາຫັກອອກຈາກຈຳນວນຮຸ້ນທັງໝົດຂອງຜູ້ເຂົ້າຮ່ວມປະຊຸມ ແລະ ລົງຄະແນນສຽງໃນແຕ່ລະວາລະ
   - ປະທານຈະປະກາດຜົນການລົງຄະແນນສຽງໃນແຕ່ລະວາລະໃຫ້ກອງປະຊຸມໄດ້ ຮັບຊາບຫຼັງຈາກລົງຄະແນນສຽງໃນແຕ່ລະວາລະສິ້ນສຸດລົງ. ໃນກໍລະນີຜູ້ຖືຮຸ້ນໄດ້ສົ່ງບັດລົງຄະແນນສຽງບໍ່ເຫັນດີພາຍຫຼັງຈາກທີ່ປະທານໄດ້ປະກາດໃຫ້ກອປະຊຸມຮັບຊາບຜົນການລົງຄະແນນສຽງໃນວາລະສິ້ນສຸດລົງແລ້ວນັ້ນ, ບໍລິສັດຈະບໍ່ໄດ້ນຳເອົາຄະແນນສຽງດັ່ງກ່າວ ມານັບຄະແນນສຽງຕື່ມອີກ

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ
628, ໜ່ວຍ 19, ບ້ານ ໂພນພະເນົາ, ກມ. 5, ຖະໜົນ ໄກສອນພົມວິຫານ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ.
ໂທ-ແຟັກ: +856 21 418 062-6

ປະທານກອງປະຊຸມສືບຕໍ່ກອງປະຊຸມວິສາມັນ ຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2020 ໂດຍລາຍງານແຕ່ລະວາລະດັ່ງຕໍ່ໄປນີ້:

ວາລະທີ 1 ຮັບຮອງລາຍງານກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີໃນຄັ້ງທີ່ຜ່ານມາ

ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ເຂົ້າຮ່ວມກອງປະຊຸມຮັບຮອງລາຍງານກອງປະຊຸມສາມັນ ຜູ້ຖືຮຸ້ນ ທີ່ປະຊຸມເມື່ອວັນທີ 29 ພຶດສະພາ 2020 ໂດຍວາລະນີ້ກອງປະຊຸມຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນ ສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ.

ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສອບຖາມກ່ຽວກັບວາລະດັ່ງກ່າວ:

- ບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມ

ເມື່ອບໍ່ມີທ່ານໃດສອບຖາມແລ້ວປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງເອົາລາຍ ງານການປະຊຸມສາມັນຜູ້ຖືຮຸ້ນປະຈຳປີໃນຄັ້ງທີ່ຜ່ານມາ ເຊິ່ງໄດ້ປະຊຸມໃນວັນທີ 29 ພຶດສະພາ 2020

ຫຼັງຈາກທີ່ໄດ້ພິຈາລະນາ ແລະ ຮັບຮອງເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນ ດັ່ງນີ້:

-	ເຫັນດີ	32,404,852	ສຽງ	ຄິດເປັນ	100.00	% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
-	ບໍ່ເຫັນດີ	0	ສຽງ	ຄິດເປັນ	0.00	% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
-	ລວມ	32,404,852	ສຽງ	ຄິດເປັນ	100.00	% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ

ມະຕິ: ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາລາຍງານການປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019 ໃນຄັ້ງທີ່ຜ່ານມາ ເຊິ່ງຈັດຂຶ້ນໃນວັນທີ 29 ພຶດສະພາ 2020 ດ້ວຍຈຳນວນສຽງເຫັນດີເກີນກວ່າເຄິ່ງໜຶ່ງຂອງ ສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ

ວາລະທີ 2 ພິຈາລະນາພິຈາລະນາອະນຸມັດ ແກ້ໄຂສັດສ່ວນຮຸ້ນຂອງຜູ້ສ້າງຕັ້ງ ແລະ ປ່ຽນສັດສ່ວນຮຸ້ນ Floating ໃນຕະຫຼາດຫຼັກຊັບລາວ

ປະທານກອງປະຊຸມສະເໜີໃຫ້ກອງປະຊຸມພິຈາລະນາ ອະນຸມັດ ແກ້ໄຂສັດສ່ວນຮຸ້ນຂອງຜູ້ສ້າງຕັ້ງ ແລະ ປ່ຽນສັດສ່ວນຮຸ້ນ Floating ໃນຕະຫຼາດຫຼັກຊັບລາວ ໂດຍວາລະນີ້ຕ້ອງຜ່ານຄວາມເຫັນດີດ້ວຍມະຕິ ສະເພາະ ຄືຕ້ອງໄດ້ຮັບຄວາມເຫັນດີດ້ວຍຄະແນນສຽງ ສອງສ່ວນສາມ ຂອງຜູ້ເຂົ້າຮ່ວມປະຊຸມ ແລະ ມີຢ່າງ ໜ້ອຍ ແປດສິບສ່ວນຮ້ອຍ ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ

ເຊິ່ງປະທານກອງປະຊຸມ ໄດ້ມອບໝາຍໃຫ້ ທ່ານ ມານິບ ຕຣິລິດວິໄລ, ສະມາຊິກສະພາບໍລິຫານ ແລະ ຜູ້ອຳນວຍການໃຫຍ່ ເປັນຜູ້ນຳສະເໜີ ກ່ຽວກັບການແກ້ໄຂສັດສ່ວນຮຸ້ນຂອງຜູ້ສ້າງຕັ້ງ ແລະ ປ່ຽນສັດສ່ວນຮຸ້ນ Floating ໃນຕະຫຼາດຫຼັກຊັບລາວ ດັ່ງນີ້:

ວັດຖຸປະສົງ ແລະ ເຫດຜົນ : ບໍລິສັດ ເປັນບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວແລ້ວ ເຫັນຄວນນຳຮຸ້ນຂອງ ບໍລິສັດ ທັງໝົດເຂົ້າຝາກກັບຕະຫຼາດຫຼັກຊັບລາວ

- ເພື່ອຮັບເງິນປັນຜົນ ຜ່ານຕະຫຼາດຫຼັກຊັບລາວ
- ຫາກຜູ້ຖືຮຸ້ນສ້າງຕັ້ງຕ້ອງການຊື້/ຂາຍ ສົມຄວນຊື້/ຂາຍຜ່ານລະບົບຂອງຕະຫຼາດຫຼັກຊັບ

ຂໍ້ສະເໜີໃຫ້ຜູ້ຖືຮຸ້ນພິຈາລະນາ

- ແກ້ໄຂສັດສ່ວນຮຸ້ນຂອງຜູ້ສ້າງຕັ້ງ ແລະ ປ່ຽນສັດສ່ວນຮຸ້ນ Floating ໃນຕະຫຼາດຫຼັກຊັບລາວ ແລະ ຮຸ້ນຂອງຜູ້ສ້າງຕັ້ງເຂົ້າຝາກກັບຕະຫຼາດຫຼັກຊັບລາວທັ້ງໝົດ ຫຼື ຈຳນວນສູງສຸດທີ່ຕະຫຼາດຫຼັກຊັບລາວ ຫຼື ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບລາວ ຫຼື ກົດໝາຍທີ່ກ່ຽວຂ້ອງອະນຸຍາດ
- ມອບອຳນາດໃຫ້ຜູ້ອຳນວຍການໃຫຍ່ ເປັນຜູ້ດຳເນີນການ, ຕັດສິນໃຈ ແລະ ລົງນາມໃນເອກະສານຕ່າງໆ ທີ່ກ່ຽວຂ້ອງກັບເລື່ອງດັ່ງກ່າວ ເພື່ອໃຫ້ບັນລຸຕາມເຈດຈຳນົງ ຕາມວາລະທີ່ໄດ້ອະນຸມັດໄວ້

ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສອບຖາມກ່ຽວກັບວາລະດັ່ງກ່າວ:

- ບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມ

ເມື່ອບໍ່ມີທ່ານໃດສອບຖາມແລ້ວປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາອະນຸມັດ ແກ້ໄຂ ສັດສ່ວນຮຸ້ນຂອງຜູ້ສ້າງຕັ້ງ ແລະ ປ່ຽນສັດສ່ວນຮຸ້ນ Floating ໃນຕະຫຼາດຫຼັກຊັບລາວ

ຫຼັງຈາກທີ່ໄດ້ພິຈາລະນາ ແລະ ຮັບຮອງເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນ ດັ່ງນີ້:

-	ເຫັນດີ	26	ທ່ານ	ຄິດເປັນ	100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
-	ບໍ່ເຫັນດີ	0	ທ່ານ	ຄິດເປັນ	0.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
-	ລວມ	26	ທ່ານ	ຄິດເປັນ	100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ

-	ເຫັນດີ	32,404,852	ສຽງ	ຄິດເປັນ	81.01 % ຂອງຈຳນວນຮຸ້ນທັງໝົດ
-	ບໍ່ເຫັນດີ	0	ສຽງ	ຄິດເປັນ	0.00 % ຂອງຈຳນວນຮຸ້ນທັງໝົດ
-	ລວມ	32,404,852	ສຽງ	ຄິດເປັນ	81.01 % ຂອງຈຳນວນຮຸ້ນທັງໝົດ

ມະຕິ: ກອງປະຊຸມພິຈາລະນາອະນຸມັດ ແກ້ໄຂສັດສ່ວນຮຸ້ນຂອງຜູ້ສ້າງຕັ້ງ ແລະ ປ່ຽນສັດສ່ວນຮຸ້ນ Floating ໃນຕະຫຼາດຫຼັກຊັບລາວ ດ້ວຍມະຕິສະເພາະ ໂດຍມີຄະແນນສຽງຫຼາຍກວ່າ ສອງໃນສາມ ຂອງຜູ້ເຂົ້າຮ່ວມ ປະຊຸມ ແລະ ຫຼາຍກວ່າ 80 ສ່ວນຮ້ອຍຂອງຮຸ້ນທີ່ອອກແລ້ວທັ້ງໝົດ ດັ່ງນີ້:

- ແກ້ໄຂສັດສ່ວນຮຸ້ນຂອງຜູ້ສ້າງຕັ້ງ ແລະ ປ່ຽນສັດສ່ວນຮຸ້ນ Floating ໃນຕະຫຼາດຫຼັກຊັບລາວ ແລະ ຮຸ້ນຂອງຜູ້ສ້າງຕັ້ງເຂົ້າຝາກກັບຕະຫຼາດຫຼັກຊັບລາວທັ້ງໝົດ ຫຼື ຈຳນວນສູງສຸດທີ່ຕະຫຼາດຫຼັກຊັບ ລາວ ຫຼື ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບລາວ ຫຼື ກົດໝາຍທີ່ກ່ຽວຂ້ອງອະນຸຍາດ
- ມອບອຳນາດໃຫ້ຜູ້ອຳນວຍການໃຫຍ່ ເປັນຜູ້ດຳເນີນການ, ຕັດສິນໃຈ ແລະ ລົງນາມໃນເອກະສານ ຕ່າງໆ ທີ່ກ່ຽວຂ້ອງກັບເລື່ອງດັ່ງກ່າວ ເພື່ອໃຫ້ບັນລຸຕາມເຈດຈຳນົງ ຕາມວາລະທີ່ໄດ້ອະນຸມັດໄວ້

ວາລະທີ 3 ພິຈາລະນາອະນຸມັດປ່ຽນແປງມູນຄ່າຮຸ້ນ ຫຼື ມູນຄ່າກຳນົດ (Par value)

ປະທານກອງປະຊຸມສະເໜີໃຫ້ກອງປະຊຸມພິຈາລະນາອະນຸມັດປ່ຽນແປງມູນຄ່າຮຸ້ນ ຫຼື ມູນຄ່າກຳນົດ(Par value) ໂດຍວາລະນີ້ຕ້ອງຜ່ານຄວາມເຫັນດີດ້ວຍມະຕິສະເພາະຄືຕ້ອງໄດ້ຮັບຄວາມເຫັນດີດ້ວຍຄະແນນສຽງ ສອງສ່ວນສາມ ຂອງຜູ້ເຂົ້າຮ່ວມປະຊຸມ ແລະ ມີຢ່າງໜ້ອຍ ແປດສິບສ່ວນຮ້ອຍ ຂອງຈຳນວນຮຸ້ນທີ່ຖອກແລ້ວທັ້ງ ໝົດ

ເຊິ່ງປະທານກອງປະຊຸມ ໄດ້ມອບໝາຍໃຫ້ທ່ານ ມານິບ ຕຣິລິດວິໄລ, ສະມາຊິກສະພາບໍລິຫານ ແລະ ຜູ້ອຳນວຍການໃຫຍ່ ເປັນຜູ້ນຳສະເໜີກ່ຽວກັບການປ່ຽນແປງມູນຄ່າຮຸ້ນ ຫຼື ມູນຄ່າກຳນົດ(Par value) ດັ່ງນີ້:

ວັດຖຸປະສົງ ແລະ ເຫດຜົນ :

- ເພື່ອເປັນການເພີ່ມໂອກາດຂອງຜູ້ລົງທຶນລາຍຍ່ອຍໃຫ້ສາມາດເຂົ້າມາລົງທຶນໃນຮຸ້ນຂອງບໍລິສັດໄດ້ ງ່າຍຂຶ້ນ
- ເພື່ອເປັນການສ້າງໂອກາດໃນການເພີ່ມສະພາບຄ່ອງໃນການຊື້ຂາຍຮຸ້ນຂອງບໍລິສັດ

ຂໍ້ສະເໜີໃຫ້ຜູ້ຖືຮຸ້ນພິຈາລະນາ

- ປ່ຽນແປງມູນຄ່າຮຸ້ນ ຫຼື ມູນຄ່າກຳນົດ (PAR VALUE) ຈາກຮຸ້ນລະ 1,000 ກີບເປັນ 100 ກີບ
- ມອບອຳນາດໃຫ້ ຜູ້ອຳນວຍການໃຫຍ່ ເປັນຜູ້ດຳເນີນການ, ຕັດສິນໃຈ ແລະ ລົງນາມໃນ ເອກະສານຕ່າງໆທີ່ກ່ຽວຂ້ອງກັບເລື່ອງດັ່ງກ່າວ ເພື່ອໃຫ້ບັນລຸຕາມເຈດຈຳນົງ ຕາມວາລະທີ່ໄດ້ ອະນຸມັດໄວ້

ຕາຕະລາປຽບທຽບລະຫວ່າງກ່ອນ ແລະ ຫຼັງດຳເນີນການ

	ປະຈຸບັນ	ຫຼັງປ່ຽນແປງ
ຈຳນວນທຶນຈົດທະບຽນ	40,000,000,000 ກີບ	40,000,000,000 ກີບ
ມູນຄ່າກຳນົດ(Par Value) ຕໍ່ຮຸ້ນ	1,000 ກີບ	100 ກີບ
ຈຳນວນຮຸ້ນ	40,000,000 ຮຸ້ນ	400,000,000 ຮຸ້ນ
ລາຄາຕະຫຼາດ(ວັນທີ 1/12/2020) *ປະມານການຕາມສັດສ່ວນ	2,790 ກີບ	279 ກີບ*

ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສອບຖາມກ່ຽວກັບວາລະດັ່ງກ່າວ:

- ບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມ

ເມື່ອບໍ່ມີທ່ານໃດສອບຖາມແລ້ວປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ອະນຸມັດປ່ຽນແປງ ມູນຄ່າຮຸ້ນ ຫຼື ມູນຄ່າກຳນົດ (Par value)

ຫຼັງຈາກທີ່ໄດ້ພິຈາລະນາ ແລະ ຮັບຮອງເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນ ດັ່ງນີ້:

- ເຫັນດີ 26 ທ່ານ ຄິດເປັນ 100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ບໍ່ເຫັນດີ 0 ທ່ານ ຄິດເປັນ 0.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ລວມ 26 ທ່ານ ຄິດເປັນ 100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ

- ເຫັນດີ 32,404,852 ສຽງ ຄິດເປັນ 81.01 % ຂອງຈຳນວນຮຸ້ນທັງໝົດ
- ບໍ່ເຫັນດີ 0 ສຽງ ຄິດເປັນ 0.00 % ຂອງຈຳນວນຮຸ້ນທັງໝົດ
- ລວມ 32,404,852 ສຽງ ຄິດເປັນ 81.01 % ຂອງຈຳນວນຮຸ້ນທັງໝົດ

<u>ມະຕິ:</u> ກອງປະຊຸມພິຈາລະນາອະນຸມັດ ປ່ຽນແປງມູນຄ່າຮຸ້ນ ຫຼື ມູນຄ່າກຳນົດ (Par value) ດ້ວຍມະຕິສະເພາະ ໂດຍມີຄະແນນສຽງຫຼາຍກວ່າ ສອງໃນສາມ ຂອງຜູ້ເຂົ້າຮ່ວມປະຊຸມ ແລະ ຫຼາຍກວ່າ 80 ສ່ວນຮ້ອຍຂອງຮຸ້ນທີ່ອອກແລ້ວທັ້ງໝົດ ດັ່ງນີ້:

- ປ່ຽນແປງມູນຄ່າຮຸ້ນ ຫຼື ມູນຄ່າກຳນົດ (PAR VALUE) ຈາກຮຸ້ນລະ 1,000 ກີບ ເປັນ 100 ກີບ

	ປະຈຸບັນ	ຫຼັງປ່ຽນແປງ
ມູນຄ່າກຳນົດ (Par Value) ຕໍ່ຮຸ້ນ	1,000 ກີບ	100 ກີບ
ຈຳນວນຮຸ້ນ	40,000,000 ຮຸ້ນ	400,000,000 ຮຸ້ນ
ຈຳນວນທຶນຈົດທະບຽນ	40,000,000,000 ກີບ	40,000,000,000 ກີບ

- ມອບອຳນາດໃຫ້ ຜູ້ອຳນວຍການໃຫຍ່ ເປັນຜູ້ດຳເນີນການ, ຕັດສິນໃຈ ແລະ ລົງນາມໃນເອກະສານຕ່າງໆທີ່ກ່ຽວຂ້ອງກັບເລື່ອງດັ່ງກ່າວ ເພື່ອໃຫ້ບັນລຸຕາມເຈດຈຳນົງ ຕາມວາລະທີ່ໄດ້ອະນຸມັດໄວ້

ວາລະທີ 4 ພິຈາລະນາອະນຸມັດແກ້ໄຂກົດລະບຽບຂອງບໍລິສັດ

ປະທານກອງປະຊຸມສະເໜີໃຫ້ກອງປະຊຸມພິຈາລະນາອະນຸມັດແກ້ໄຂກົດລະບຽບຂອງບໍລິສັດໂດຍວາລະນີ້ຕ້ອງຜ່ານຄວາມເຫັນດີດ້ວຍມະຕິສະເພາະ ຄືຕ້ອງໄດ້ຮັບຄວາມເຫັນດີດ້ວຍຄະແນນສຽງ ສອງສ່ວນສາມ ຂອງຜູ້ເຂົ້າຮ່ວມປະຊຸມ ແລະ ມີຢ່າງໜ້ອຍ ແປດສິບສ່ວນຮ້ອຍ ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ

ເຊິ່ງປະທານກອງປະຊຸມ ໄດ້ມອບໝາຍໃຫ້ ທ່ານ ມານິບ ຕຣີລິດວິໄລ, ສະມາຊິກສະພາບໍລິຫານ ແລະ ຜູ້ອຳນວຍການໃຫຍ່ ເປັນຜູ້ນຳສະເໜີກ່ຽວກັບການແກ້ໄຂກົດລະບຽບຂອງບໍລິສັດ ດັ່ງນີ້:

ວັດຖຸປະສົງ ແລະ ເຫດຜົນ : ການປ່ຽນແປງສັດສ່ວນຮຸ້ນຂອງຜູ້ສ້າງຕັ້ງ ແລະ ການປັບປ່ຽນມູນຄ່າກຳນົດ (Par Value) ຕ້ອງແກ້ໄຂລະບຽບຂອງບໍລິສັດ

ຂໍ້ສະເໜີໃຫ້ຜູ້ຖືຮຸ້ນພິຈາລະນາ

- ແກ້ໄຂກົດລະບຽບຂອງບໍລິສັດ ໃຫ້ສອດຄ້ອງກັບການປ່ຽນແປງມູນຄ່າຮຸ້ນ ຫຼື ມູນຄ່າກຳນົດ (PAR VALUE) ແລະ ການແກ້ໄຂສັດສ່ວນຮຸ້ນຂອງຜູ້ສ້າງຕັ້ງ ແລະ ປ່ຽນສັດສ່ວນຮຸ້ນ floating ໃນຕະຫຼາດຫຼັກຊັບລາວຕາມທີ່ກອງປະຊຸມໄດ້ພິຈາລະນາອະນຸມັດໄວ້ໃນວາລະທີ 2 ແລະ 3
- ມອບອຳນາດໃຫ້ ຜູ້ອຳນວຍການໃຫຍ່ ເປັນຜູ້ດຳເນີນການ, ຕັດສິນໃຈ ແລະ ລົງນາມໃນເອກະສານຕ່າງໆ ທີ່ກ່ຽວຂ້ອງກັບເລື່ອງດັ່ງກ່າວ ເພື່ອໃຫ້ບັນລຸຕາມເຈດຈຳນົງ ຕາມວາລະທີ່ໄດ້ອະນຸມັດໄວ້

ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສອບຖາມກ່ຽວກັບວາລະດັ່ງກ່າວ:

- ບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມ

ເມື່ອບໍ່ມີທ່ານໃດສອບຖາມແລ້ວປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມແກ້ໄຂກົດລະບຽບຂອງບໍລິສັດ ຫຼັງຈາກທີ່ໄດ້ພິຈາລະນາ ແລະ ຮັບຮອງເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນ ດັ່ງນີ້:

-	ເຫັນດີ	26	ທ່ານ	ຄິດເປັນ	100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
-	ບໍ່ເຫັນດີ	0	ທ່ານ	ຄິດເປັນ	0.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
-	ລວມ	26	ທ່ານ	ຄິດເປັນ	100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ

-	ເຫັນດີ	32,404,852	ສຽງ	ຄິດເປັນ	81.01 % ຂອງຈຳນວນຮຸ້ນທັງໝົດ
-	ບໍ່ເຫັນດີ	0	ສຽງ	ຄິດເປັນ	0.00 % ຂອງຈຳນວນຮຸ້ນທັງໝົດ
-	ລວມ	32,404,852	ສຽງ	ຄິດເປັນ	81.01 % ຂອງຈຳນວນຮຸ້ນທັງໝົດ

<u>ມະຕິ:</u> ກອງປະຊຸມພິຈາລະນາອະນຸມັດ ແກ້ໄຂກົດລະບຽບຂອງບໍລິສັດ ດ້ວຍມະຕິສະເພາະ ໂດຍມີຄະແນນສຽງຫຼາຍກວ່າ ສອງໃນສາມ ຂອງຜູ້ເຂົ້າຮ່ວມປະຊຸມ ແລະ ຫຼາຍກວ່າ 80 ສ່ວນຮ້ອຍຂອງຮຸ້ນທີ່ອອກແລ້ວທັງໝົດ ດັ່ງນີ້:

- ແກ້ໄຂກົດລະບຽບຂອງບໍລິສັດໃຫ້ສອດຄ້ອງກັບການປ່ຽນແປງມູນຄ່າຮຸ້ນ ຫຼື ມູນຄ່າກຳນົດ (PAR VALUE) ແລະ ການແກ້ໄຂສັດສ່ວນຮຸ້ນຂອງຜູ້ສ້າງຕັ້ງ ແລະ ປ່ຽນສັດສ່ວນຮຸ້ນ floating ໃນຕະຫຼາດຫຼັກຊັບລາວ ຕາມທີ່ກອງປະຊຸມພິຈາລະນາອະນຸມັດໄວ້ໃນວາລະທີ 2 ແລະ 3
- ມອບອຳນາດໃຫ້ ຜູ້ອຳນວຍການໃຫຍ່ ເປັນຜູ້ດຳເນີນການ, ຕັດສິນໃຈ ແລະ ລົງນາມໃນເອກະສານຕ່າງໆ ທີ່ກ່ຽວຂ້ອງກັບເລື່ອງດັ່ງກ່າວ ເພື່ອໃຫ້ບັນລຸຕາມເຈດຈຳນົງ ຕາມວາລະທີ່ໄດ້ອະນຸມັດໄວ້

ບໍ່ມີເລື່ອງອື່ນໆທີ່ຕ້ອງໃຫ້ກອງປະຊຸມຮັບຊາບ ແລະ ພິຈາລະນາ ທ່ານປະທານກອງປະຊຸມຈຶ່ງສະເໜີໃຫ້ປິດກອງປະຊຸມໃນເວລາ 10:55 ໂມງ

ປະທານກອງປະຊຸມ

(ເຊັນແທນ)

(ທ່ານນາງ ອົນທະວີໄລ ອຸດົມ)